# Mouvement Lao pour les Droits de l'Homme (MLDH)
# ຂະບວນການ ລາວ ເພື່ອ ສິດທິ ມະນຸດ(ຂລສຜມ)

**BP 123, 77206 Torcy Cedex, France**
**e-mail : mldh@mldh-lao.org- web:http://www.mldh-lao.org/**


**ຖແລງການ** **ປາຣີສ, 3 ພືສຈິກາ 2009**

## ຕຽມການ ປະທ້ວງ ແບບ ສັນຕິວິທີ ອີກຄັ້ງໃຫ່ມ ໃນ ນະຄອນວຽງຈັນ : ມີ ການ ຈັບກຸມ ກວ່າ 300 ຄົນ

ອີງຕາມ ຂ່າວ ທີ່ ສົ່ງ ອອກມາ ເຖີງ ຂະບວນການ ລາວ ເພື່ອ ສິດທິມະນຸດ (ຂລສມ), ໃນ ວັນຈັນ ທີ 2 ພືສຈິກາ 2009, ຕຳຣວດລັບ ຂອງ ສປປລ ໃດ້ ທຳການ ຈັບ ກຸມ 300 ກວ່າ ຄົນ ຂະນະ ທີ່ ພາກັນ ກຳລັງ ຕຽມການປະທ້ວງ ແບບສັນຕິວິທີ ໃນ ນະຄອນ ວຽງຈັນ ເພື່ອ ຮຽກຮ້ອງ ໃຫ້ ມີການ ເຄົາຣົບ ນັບຖື ສິດທິ ມະນຸດ ແລະໃຫ້ ມີ ຫລາຍພັກ ການເມືອງ.

ຂລສມ ໃດ້ ຮັບ ຣາຍງານ ລະອຽດ ແລະ ຄວາມ ກະຈ່າງແຈ້ງ ດັ່ງ ນີ້ : ມີ ການຈັບກູມ ພ້ອມ ພ້ອມກັນ, ຣວມແລ້ວ ປະມານ ກ່ວາ 300 ຄົນ ໃນ ສຖານທີ່ ຫລາຍແຫ່ງ ຂອງ ປະເທດ ໃນຕອນ ຮຸ່ງເຊົ້າ ຂອງວັນທີ 2 ພືສຈິກາ 2009 ຊຶ່ງ ຈຳນວນ ຕ່າງຕ່າງ ມີ ດັ່ງນີ້ :

- ມີ ຫລາຍ ກ່ວາ 100 ຄົນ ຖືກຈັບ ກຸມ ທີ່ ປາກກະດີງ, ແຂວງ ບໍລິຄຳໄຊ
- ມີ ປະມານ 20 ກ່ວາ ຄົນ ຖືກຈັບ ກຸມ ທີ່ ເມືອງ ໂພນໂຮງ ແຂວງ ວຽງຈັນ ໃນຕອນ ທີ ພາກັນ ໄປ ບຸນ ທະດຫລວງ
- ມີ ປະມານ 200 ກ່ວາ ຄົນ ຖືກຈັບ ຢູ່ ວຽງຈັນເອງ ຕອນ ທີ ກຳລັງ ຕຽມ ທ້ອນໂຮມກັນ ເພື່ອ ທຳການ ປະທ້ວງ ໂດຍ ສັນຕິວິທີ

ຈຸດປະສົງ ຫລື ເປົ້າຫມາຍ ຂອງ ການ ປະທ້ວງ ໃນ ຄັ້ງນີ້ ກໍ່ ເພື່ອ ຮຽກຮ້ອງ

- ໃຫ້ມີ ປະຊາທິປະໄຕ
- ໃຫ້ມີ ການ ເຄົາຣົບ ແລະ ນັບຖື ສິດທິ ມະນຸດ
- ໃຫ້ ລົບລ້າງ ສັນຍາ ສັມພັນ ພິເສດ ລາວ-ວຽດນາມ ເຊັນ ວັນທີ ໑໘ ກໍຣະກະດາ ໑໙໗໗
- ໃຫ້ ປົດປ່ອຍ ນັກໂທດ ການເມືອງ
- ໃຫ້ ມີ ຫລາຍ ພັກ ການເມືອງ

ເຖີງ ແມ່ນວ່າ ໃນ ເວລາ ຕໍ່ມາ ມີຈຳນວນ ຫລາຍຄົນ ໃດ້ ຖືກປ່ອຍຕົວ ແລ້ວ ກໍ່ຕາມ, ໃນ ຈຳນວນ ນັ້ນ, ມີອີກຫລາຍຄົນ ຍັງ ຖືກກັກຂັງຕົວ ອີກຕໍ່ໄປ ເຊັ່ນ, ພວກ ຖືກຈັບ ຢູ່ ເມືອງ ໂພນໂຮງ: ນາງ ກິ່ງແກ້ວ ອາຍຸ 39 ປີ, ທ້າວ ສູບິນ ອາຍຸ 35 ປີ, ທ້າວ ສ່ວນ ອາຍຸ 50 ປີ – ທ້າວ ຫນູ ອາຍຸ 54 ປີ ຖືກຈັບຢູ່ ປາກກະດີງ- ນາງສົມຈິດ ອາຍຸ 29 ປີ ທ້າວສົມຄິດ ອາຍຸ 28 ປີ ແລະ ທ້າວ ສຸຣິຍາ ອາຍຸ 26 ປີ ຖືກຈັບ ຢູ່ໃນ ວຽງຈັນ ເອງ.

ຂລສມ ມີ ຄວາມ ວິຕົກ ກັງວົນ ແລະ ເປັນຫ່ວງ ທີ່ສຸດ ໃນເຫດການ ຈັບກຸມ ດັ່ງກ່າວ. ຂລສມ ຂໍໃຫ້ ເຈົ້າຫນ້າທີ່ ສປປລ ໃຫ້ຄວາມ ກະຈ່າງ ແຈ້ງ ໂດຍດ່ວນ ກ່ຽວກັບ ການຈັບກຸມ ນີ້ ແລະ ປ່ອຍຕົວ ບຸກຄົນ ທີຍັງ ຖືກກັກຂັງ ຍ້ອນ ເຫດຜົນດຽວ ຄື ປາຖນາ ຢາກປະທ້ວງ ແບບສັນຕິວິທີ ເພື່ອ ຮ້ອງຂໍ ໃຫ້ມີ ປະຊາທິປະໄຕ ແລະການ ນັບຖື ສິດທິ ມະນຸສ ເທົ່ານັ້ນເອງ.

ຂລສມ ໃຫ້ ຂໍ້ ສັງເກດ ຕື່ມອີກ ວ່າ ເຫດການ ຮ້າຍແຮງນີ້ ໃດ້ ເກີດຂຶ້ນ ພຽງ ນຶ່ງເດືອນ ພາຍຫລັງ ທີ ສປປລ ໃດ້ ເຊັນ ຮັບຮອງເອົາ ສົນທິສັນຍາ ວ່າດ້ວຍ ສິດທິ ພົລະເມືອງ ແລະ ສິດທິ ທາງການເມືອງ. ໃນການ ຮັບຮູ້ ສົນທິສັນຍາ ນີ້ ສປປລ ມີ ຫນ້າທີ່ ຄ້ຳປະກັນ ປະຊາຊົນລາວ ໃຫ້ມີ ສິດທິ ໃນການ ເຊື່ອຖື ສາສນາ ຕາມໃຈຊອບ, ມີ ສິດທິ ໃນການ ຈັດຕັ້ງ ສະມາຄົມ, ສິດທິ ໃນການ ປາກເວົ້າຂີດຂຽນ ຊຸມນຸມ ປະທ້ວງ ແລະ ສິດທິ ໃນ ດ້ານ ການເມືອງ.
ເຫດການ ທີ່ ເສົ້າສະເທືອນໃຈນີ້ ໃດ້ ເກີດຂື້ນ ໃນອາທິດດຽວ ເທົ່ານັ້ນ ພາຍຫລັງ ວັນຄົບຮອບ 10 ປີ ຂອງ ຂະບວນ ລຸກຮື້ 26 ຕຸລາ 1999 ຊຶ່ງ ໃນ ປະຈຸບັນ ນີ້ ຍັງມີ ຜູ້ນຳຂະບວນການນີ້ ຖືກຂັງ ໃນ ຄຸກ ຂອງ ພະເດັດການ ພັກດຽວ ຢູ່ ຕລອດມາ.